# ແກມຊິວ (GAMCIL)

**ໂຄງການ ສ້າງຄວາມເຂັ້ມແຂງໃຫ້ແກ່ສື່ມວນຊົນ ໂດຍການມີສ່ວນຮ່ວມຂອງອົງການ ຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອການພັດທະນາສີຂຽວ ໃນ ສປປ ລາວ**

## ຊົມເຊີຍວັນແມ່ຍິງ ສາກົນ ທີ 8 ເດືອນ 3

ສະມາຄົມນັກຂ່າວ ແລະ ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ ສະເຫຼີມສະຫຼອງວັນແມ່ຍິງສາກົນ ແບບແຄມເປນທາງອອນລາຍ ໂດຍມີຜູ້ເຂົ້າຮ່ວມຈາກນັກຂ່າວພາກລັດ, ຜູ້ນຳໃຊ້ສື່ສັງຄົມອອນລາຍ, ພະນັກງານໂຄງການ GAMCIL ແລະ ສະມາຄົມນັກຂ່າວລາວ ທີ່ໄດ້ປະກອບສ່ວນໃນການສ້າງແຮງບັນດານໃຈ ແລະ ສົ່ງເສີມການມີສ່ວນຮ່ວມຂອງແມ່ຍິງ ແລະ ຜູ້ຊາຍ.



## ງານວາງສະແດງອົງການຈັດຕັ້ງທາງສັງຄົມ (CSO) ປະຈຳປີ 2025

ສະມາຄົມນັກຂ່າວ ແລະ ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ ໄດ້ເຂົ້າຮ່ວມວາງສະແດງຜະລິດຕະພັນຂອງໂຄງການ GAMCIL ທີ່ງານວາງສະແດງອົງການຈັດຕັ້ງທາງສັງຄົມ ປະຈຳປີ 2025 ທີ່ນະຄອນຫຼວງວຽງຈັນ.







## ນັກຂ່າວສີຂຽວ ແລກປ່ຽນບົດຮຽນການລາຍງານຂ່າວສີຂຽວ ທີ່ແຂວງສາລະວັນ

ສື່ມວນຊົນແຂວງສາລະວັນ ໄດ້ແລກປ່ຽນ ແລະ ຖອດຖອນບົດຮຽນ, ປະສົບການໃນການລາຍງານຂ່າວບັນຫາສີຂຽວ (Green Issues) ຈາກຜູ້ທີ່ເຄີຍເຂົ້າຮ່ວມໃນໄລຍະຜ່ານມາ, ຂອງ ໂຄງການ GAMCIL. ຈັດຂຶ້ນໃນວັນທີ 22 ເມສາ, ເຊິ່ງມີນັກຂ່າວແຂວງ ເຂົ້າຮ່ວມທັງໝົດ 11 ທ່ານ, ຍິງ 5 ທ່ານ.

**ຈຸດປະສົງຫຼັກ:**

- ເພື່ອຜະລິດຂ່າວ, ບົດຄວາມ, ແນວຄວາມຄິດສ້າງສັນ, ວິດີໂອ, ໂປສະເຕີ້ ເພື່ອເຜີຍແຜ່ຜ່ານສື່ຕ່າງໆໃຫ້ຫຼາຍຂຶ້ນ.
- ເພື່ອສົ່ງຕໍ່ຄວາມຮູ້, ບົດຮຽນ ລະຫວ່າງຜູ້ທີ່ເຄີຍເຂົ້າຮ່ວມ ໃຫ້ກັບນັກຂ່າວພາຍໃນແຂວງ ກ່ຽວກັບເຕັກນິກການຜະລິດເນື້ອໃນຂ່າວ ບັນຫາສິ່ງແວດລ້ອມ ເປັນຕົ້ນ: ບັນຫາຂີ້ເຫຍື້ອ, ບັນຫາມົນລະພິດທາງອາກາດ, ທາງນໍ້າ ແລະ ແນວທາງການພັດທະນາສີຂຽວ ແບບຍືນຍົງ
- ເພື່ອແນ່ໃສ່ການເຜີຍແຜ່ໃຫ້ສັງຄົມຮັບຮູ້ ແລະ ເຂົ້າໃຈເຖິງຄວາມສຳຄັນຂອງການປົກປັກຮັກສາສິ່ງແວດລ້ອມ ແລະ ການຫຼຸດຜ່ອນການທຳລາຍປ່າໄມ້, ທຳມະຊາດ ແລະ ລະບົບນິເວດ ທີ່ມີຜົນກະທົບກ່ຽວກັບການປ່ຽນແປງດິນຟ້າອາກາດ ນັບມື້ນັບຮຸນແຮງ ແລະ ຫຼາຍຂຶ້ນ ໃນປັດຈຸບັນ.





## ຝຶກອົບຮົມຄູຝຶກ ການລາຍງານຂ່າວບັນຫາສີຂຽວ

ໃນວັນທີ 27-30 ເມສາ 2026, ໄດ້ມີພິທີເປີດຊຸດຝຶກອົບຮົມຄູຝຶກໃນຫົວຂໍ້ "ການລາຍງານຂ່າວບັນຫາສີຂຽວ"

ເປົ້າໝາຍຫຼັກແມ່ນເພື່ອຍົກລະດັບທັກສະການສ້າງເນື້ອໃນ ແລະ ການວາງແຜນແຄມເປນ ດ້ານສິ່ງແວດລ້ອມໃຫ້ມີຄວາມໂດດເດັ່ນ ແລະ ໜ້າສົນໃຈ ໃຫ້ແກ່ພະນັກງານໂຄງການ ແລະ ສະມາຊິກຂອງສະມາຄົມນັກຂ່າວລາວ.

ກ່າວເປີດງານໂດຍ ທ່ານ ທອງຫຼໍ່ ດວງສະຫວັນ, ຄະນະບໍລິຫານງານ ສະມາຄົມນັກຂ່າວແຫ່ງ ສປປ ລາວ, ທ່ານນາງ ແກ້ວປາລິນາ ວົງໂພສີ, ອຳນວຍການຝ່າຍບໍລິຫານ ແລະ ການເງິນ, ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ.

ພາຍຫຼັງສຳເລັດການເຂົ້າຮ່ວມຝຶກອົບຮົມຄູຝຶກ, ຜູ້ເຂົ້າຮ່ວມສາມາດສ້າງຫຼັກສູດການລາຍງານຂ່າວບັນຫາສີຂຽວຂອງຕົນເອງ ເພື່ອນຳເອົາໄປແລກປ່ຽນ ແລະ ສອນຕໍ່ໃຫ້ກັບເພື່ອນຮ່ວມງານໄດ້, ຮູ້ເຕັກນິກໃນການເປັນຄູຝຶກທີ່ດີ, ສາມາດນຳພານັກຂ່າວ ແລະ ຜູ້ທີ່ສົນໃຈດ້ານວຽກງານສື່ ໂດຍສະເພາະແມ່ນການນຳໄປຝຶກອົບຮົມ ແລະ ແລກປ່ຽນດ້ານສື່ສິ່ງແວດລ້ອມຮ່ວມກັບໄວໜຸ່ມທີ່ຢູ່ໃນແຂວງຂອງຕົນເອງ ເພື່ອວາງແຜນຜະລິດເນື້ອໃນກ່ຽວກັບບັນຫາສິ່ງແວດລ້ອມ, ການວາງແຜນຮ່ວມກັນເພື່ອຮັບມືກັບບັນຫາສິ່ງແວດລ້ອມ ແລະ ປູກຈິດສຳນຶກດ້ານສິ່ງແວດລ້ອມຜ່ານສື່ສັງຄົມອອນລາຍໄດ້.








## ຝຶກອົບຮົມການລາຍງານຂ່າວບັນຫາສີຂຽວ ໃຫ້ແກ່ນັກຂ່າວພາກເໜືອ

ໃນວັນທີ 4-8 ພຶດສະພາ 2026 ນີ້, ໂຄງການ GAMCIL ໄດ້ເປີດຊຸດຝຶກອົບຮົມ ການລາຍງານຂ່າວບັນຫາສີຂຽວ ເພື່ອຍົກລະດັບສັກກະຍະພາບໃຫ້ ຕາງໜ້ານັກຂ່າວ ຈາກ 8 ແຂວງພາກເໜືອແບບເຊິ່ງໜ້າ ແລະ ຕາງໜ້າພາກກາງ ແລະ ພາກໃຕ້ໃນຮູບແບບອອນລາຍ.

ຜູ້ເຂົ້າຮ່ວມພາກເໜືອ: 26 (ຍິງ 6 ຄົນ), ພາກກາງ (ອອນລາຍ): 24 (ຍິງ 16 ຄົນ) ແລະ ພາກໃຕ້ (ອອນລາຍ): 24 (ຍິງ 13 ຄົນ).

ປະທານຮ່ວມໂດຍ ທ່ານ ສະຫວັນຄອນ ຣາຊະມູນຕຣີ, ປະທານສະມາຄົມນັກຂ່າວແຫ່ງ ສປປ ລາວ, ທ່ານ ບຸນໄຫຼ ດວງເດືອນ, ຮອງຫົວໜ້າຄະນະໂຄສະນາອົບຮົມແຂວງຫຼວງພະບາງ ແລະ ທ່ານ ບຸນເພັງ ທຳມະວົງ, ຫົວໜ້າອະວຸໂສ ບໍລິຫານແຜນງານ, ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ.

ຈຸດປະສົງຫຼັກຂອງການຝຶກອົບຮົມ ແມ່ນເພື່ອເຝິກທັກສະການຂຽນຂ່າວສັ້ນໃຫ້ດຶງດູດ ແລະ ໜ້າຕິດຕາມ, ເຈາະເລິກຂໍ້ມູນພື້ນຖານດ້ານສິ່ງແວດລ້ອມ ແລະ ບັນຫາສີຂຽວ, ຮຽນຮູ້ການນຳໃຊ້ເຄື່ອງມື AI ເຂົ້າໃນການຜະລິດຂ່າວໃຫ້ສະດວກ ແລະ ວ່ອງໄວໃນຍຸກດີຈີຕອນ. ພາຍຫຼັງທີ່ສຳເລັດການເຂົ້າຮ່ວມຝຶກອົບຮົມ, ນັກຂ່າວມີຄວາມເຂົ້າໃຈເຖິງສາເຫດທີ່ເຮັດໃຫ້ເກີດບັນຫາສິ່ງແວດ, ສາມາດຜະລິດເນື້ອໃນຂ່າວສັ້ນ ແລະ ດຶງດູດຜູ້ອ່ານ, ຮູ້ວິທີນຳໃຊ້ປັນຍາປະດິດຊ່ວຍໃນການຈັດຮຽງເນື້ອໃນຂ່າວໃຫ້ເຂົ້າໃຈງ່າຍຂຶ້ນ ແລະ ສາມາດຜະລິດໂປສເຕີ້ຂ່າວ ໄດ້ຢ່າງມີປະສິດທິພາບ.





## ຝຶກອົບຮົມ ການລາຍງານຂ່າວບັນຫາສີຂຽວ ໃຫ້ແກ່ຜູ້ນຳໃຊ້ສື່ອອນລາຍຕົນທົ່ວໄປ





ຝຶກອົບຮົມ "ການລາຍງານຂ່າວບັນຫາສີຂຽວ" ປະຈຳປີ 2026
ວັນທີ 11-15 ພຶດສະພາ 2026, ຝຶກອົບຮົມ ການລາຍງານຂ່າວບັນຫາສີຂຽວ ໃຫ້ແກ່ຜູ້ຄຸ້ມຄອງສື່ອອນລາຍຕົນທົ່ວໄປ ເຊິ່ງມີຜູ້ເຂົ້າຮ່ວມ 43 ຄົນ, 29 ຄົນ.

ໃຫ້ກຽດຮ່ວມເປັນປະທານຂອງ ທ່ານ ສະຫວັນຄອນ ຣາຊມູນຕຣີ, ປະທານສະມາຄົມນັກຂ່າວແຫ່ງ ສປປ ລາວ, ທ່ານ ສົມສົກ ສະກຸນຄຳ, ຮອງຫົວໜ້າກົມສື່ມວນຊົນ, ຄະນະໂຄສະນາອົບຮົມສູນກາງພັກ.

ຈຸດປະສົງ ເພື່ອສ້າງຄວາມອາດສາມາດໃຫ້ແກ່ຜູ້ນຳໃຊ້ສື່ອອນລາຍທົ່ວໄປໃນການສ້າງເນື້ອໃນກ່ຽວກັບບັນຫາສີຂຽວຢ່າງມີຄຸນະພາບ, ການນຳໃຊ້ປັນຍາປະດິດ (AI) ເຂົ້າໃນວຽກງານສື່, ພ້ອມທັງສ້າງຄວາມເຂົ້າໃຈກ່ຽວກັບວຽກງານຄຸ້ມຄອງສື່ມວນຊົນ, ການມີສ່ວນຮ່ວມບົດບາດທາງເພດຕໍ່ກັບການຮັກສາສິ່ງແວດລ້ອມ ແລະ ການສ້າງແຜນຜະລິດເນື້ອໃນຜ່ານຮູບແບບແຄມເປນ.

ຜ່ານການຝຶກອົບຮົມ, ຜູ້ເຂົ້າຮ່ວມສາມາດຜະລິດເນື້ອໃນກ່ຽວກັບບັນຫາສີຂຽວຢ່າງມີຄຸນນະພາບ, ເຂົ້າໃຈວິທີການນຳໃຊ້ປັນຍາປະດິດເຂົ້າໃນວຽກງານສື່ມວນຊົນ ເພື່ອເພີ່ມປະສິດທິພາບໃນການເຮັດວຽກ ແລະ ໄດ້ຮັບທັກສະໃນການສ້າງແຜນການຜະລິດເນື້ອໃນ ໃນຮູບແບບຂອງແຄມເປນ ເພື່ອການສື່ສານທີ່ມີພະລັງ ແລະ ເຂົ້າເຖິງກຸ່ມເປົ້າໝາຍໄດ້ດີຂຶ້ນ.









## ຝຶກອົບຮົມ ການບໍລິຫານຄຸ້ມຄອງຫຼັກສູດການຮຽນຮູ້ດ້ວຍຕົນເອງແບບອອນລາຍ ແລະ ຄຸ້ມຄອງເວັບໄຊ້ ຂອງສະມາຄົມນັກຂ່າວລາວ





ໃນວັນທີ 21-22 ພຶດສະພາ 2026 ທີ່ຜ່ານມາ, ໄດ້ມີການຈັດຕັ້ງການຝຶກອົບຮົມໃນຫົວຂໍ້ "ການບໍລິຫານຄຸ້ມຄອງຫຼັກສູດການຮຽນຮູ້ດ້ວຍຕົນເອງແບບອອນລາຍ ແລະ ຄຸ້ມຄອງເວັບໄຊ້ ຂອງສະມາຄົມນັກຂ່າວລາວ". ການຝຶກອົບຮົມຄັ້ງນີ້ມີຜູ້ເຂົ້າຮ່ວມທັງໝົດ 10 ທ່ານ (ຍິງ 4 ທ່ານ) ຈາກໂຄງການ GAMCIL, ສະມາຄົມນັກຂ່າວລາວ, ວິທະຍຸກະຈາຍສຽງແຫ່ງຊາດລາວ, ໂທລະພາບແຫ່ງຊາດລາວ ແລະ ໜັງສືພິມວຽງຈັນທາຍ. ຈຸດປະສົງສຳຄັນຂອງການຝຶກອົບຮົມ ແມ່ນ ເພື່ອທົບທວນຄືນກ່ຽວກັບການສ້າງຫຼັກສູດຮຽນອອນລາຍທາງເວັບໄຊ້ ຂອງສະມາຄົມນັກຂ່າວລາວ, ຊຸກຍູ້ການບໍລິຫານເວັບໄຊ້ໃຫ້ມີການເຄື່ອນໄຫວຢ່າງສະໝ່ຳສະເໝີ ແລະ ເຂົ້າເຖິງການຄຸ້ມຄອງຫຼັກສູດການຮຽນຮູ້ດ້ວຍຕົນເອງທາງອອນລາຍ ຮັບປະກັນໃຫ້ທຸກຄົນສາມາດເຂົ້າເຖິງ ແລະ ຮຽນຫຼັກສູດນັ້ນໄດ້ຢ່າງສະດວກ. ພາຍຫຼັງສຳເລັດການຝຶກອົບຮົມ, ຜູ້ເຂົ້າຮ່ວມສາມາດທົບທວນຄືນກ່ຽວກັບຂັ້ນຕອນ ແລະ ວິທີການສ້າງຫຼັກສູດຮຽນອອນລາຍທາງເວັບໄຊ ຂອງສະມາຄົມນັກຂ່າວລາວ ໃຫ້ມີຄວາມສົມບູນແບບ, ສາມາດຄຸ້ມຄອງ ແລະ ບໍລິຫານເວັບໄຊໃຫ້ມີການອັບເດດ, ເຄື່ອນໄຫວຂໍ້ມູນຂ່າວສານຢ່າງສະໝ່ຳສະເໝີ ແລະ ຄຸ້ມຄອງຫຼັກສູດການຮຽນຮູ້ດ້ວຍຕົນເອງແບບອອນລາຍ ທີ່ມີຄວາມສະດວກ, ຮັບປະກັນໃຫ້ທຸກຄົນ (ທັງນັກຂ່າວ ແລະ ຜູ້ທີ່ສົນໃຈ) ສາມາດເຂົ້າເຖິງ ແລະ ເຂົ້າຮຽນຮູ້ຫຼັກສູດຕ່າງໆ ໄດ້ຢ່າງງ່າຍຂຶ້ນ.









## ຈາກຜູ້ບໍລິໂພກສູ່ "ກະບອກສຽງສີຂຽວ": ການປ່ຽນແປງ ແລະ ມຸມມອງໃໝ່ຂອງ ຈັນນີ ຫຼ້າຄຳປາງ

ໃນຍຸກທີ່ຂໍ້ມູນໄຫຼວຽນຢ່າງໄວວາເທິງໂລກອອນລາຍ, ມັນເປັນເລື່ອງງ່າຍທີ່ເຮົາຈະຫຼົງລືມອິດທິພົນຂອງສື່ຕໍ່ໂລກຕົວຈິງ. ສຳລັບ ທ້າວ ຈັນນີ ຫຼ້າຄຳປາງ, ການເຂົ້າຮ່ວມຝຶກອົບຮົມ 5 ມື້ ໄດ້ກາຍເປັນຈຸດປ່ຽນສຳຄັນ ທີ່ປ່ຽນແນວຄິດຂອງລາວຈາກພຽງ "ຜູ້ຊົມ" ໃຫ້ກາຍມາເປັນ "ຜູ້ສ້າງສັນ" ທີ່ເຕັມໄປດ້ວຍຄວາມຮັບຜິດຊອບ.

### ມຸມມອງໃໝ່: ເລີ່ມຕົ້ນຈາກສິ່ງນ້ອຍໆ

ຈັນນີ ໄດ້ເຫັນ "ມຸມມອງໃໝ່" ວ່າວິກິດການສິ່ງແວດລ້ອມ ເຊັ່ນ: ມົນລະພິດ ແລະ ບັນຫາຂີ້ເຫຍື້ອ ບໍ່ແມ່ນເລື່ອງໄກຕົວ ແຕ່ເປັນສິ່ງທີ່ສະທ້ອນມາທຳຮ້າຍເຮົາເອງ. "ຖ້າເຮົາຢາກປ່ຽນແປງສະພາບແວດລ້ອມ ເຮົາຕ້ອງເລີ່ມຈາກຕົວເຮົາເອງກ່ອນ ແລະ ກ້າທີ່ຈະເປັນກະບອກສຽງໃຫ້ສັງຄົມ," ລາວກ່າວ. ແນວຄິດນີ້ໄດ້ກາຍເປັນແກນຫຼັກໃນການສ້າງຄອນເທນຂອງລາວ ໂດຍເນັ້ນການປຽບທຽບໃຫ້ເຫັນພາບລະຫວ່າງຊຸມຊົນທີ່ສະອາດ ແລະ ເຕັມໄປດ້ວຍຂີ້ເຫຍື້ອ ເພື່ອດຶງດູດໃຫ້ຜູ້ຊົມໄດ້ຄິດວິເຄາະ.

### ສື່ໃນຍຸກສີຂຽວ: ຈັນຍາບັນ ແລະ ຄວາມຈິງ

ການນຳໃຊ້ສື່ໃນ "ຍຸກສີຂຽວ" ຕ້ອງມາພ້ອມກັບສະຕິ. ສຳລັບຜູ້ບໍລິໂພກ, ການກວດສອບຄວາມຈິງກ່ອນເຜີຍແຜ່ ແລະ ການເປີດໃຈຮັບຫຼາຍມຸມມອງແມ່ນສິ່ງຈຳເປັນ. ໃນຂະນະດຽວກັນ, ຜູ້ຜະລິດສື່ກໍຕ້ອງມີຈັນຍາບັນ, ຍຶດໝັ້ນໃນຄວາມຈິງ ແລະ ບໍ່ສ້າງຂ່າວປອມ (Fake News) ເພື່ອຫວັງຜົນປະໂຫຍດ.

### ຂ້າມຜ່ານອຸປະສັກ: ເມື່ອຄຸນຄ່າສຳຄັນກວ່າ "ຍອດ Like"

ເຖິງຈະປະເຊີນກັບຂໍ້ຈຳກັດດ້ານອຸປະກອນ ເຊັ່ນ: ໂທລະສັບທີ່ມັກຮ້ອນ ແລະ ກະຕຸກໃນເວລາຕັດຕໍ່, ລາວກໍໄດ້ໝູນໃຊ້ AI ແລະ ແອັບພລິເຄຊັນເຊັ່ນ Canva ເຂົ້າຊ່ວຍ. ສິ່ງທີ່ໜ້າປະທັບໃຈຄືວຸດທິພາວະຂອງລາວ: "ຍອດ Like ບໍ່ໄດ້ເປັນຕົວວັດແທກວ່າຄອນເທນນັ້ນດີສະເໝີໄປ. ບາງເນື້ອຫາທີ່ມີປະໂຫຍດອາດບໍ່ໄດ້ຮັບຄວາມນິຍົມຫຼາຍ ແຕ່ມັນກໍຍັງມີຄຸນຄ່າໃນຕົວຂອງມັນ."

### ວິໄສທັດສູ່ອະນາຄົດ: ພື້ນທີ່ປອດໄພສຳລັບທຸກສຽງ

ຈັນນີ ໃຫ້ນິຍາມ "ຜູ້ຜະລິດເນື້ອຫາ" ວ່າບໍ່ຈຳເປັນຕ້ອງແມ່ນຄົນດັງ ແຕ່ແມ່ນທຸກຄົນທີ່ກ້າສື່ສານແນວຄິດ. ລາວເຄີຍເປັນຄົນທີ່ຢາກເວົ້າເລື່ອງສິ່ງແວດລ້ອມແຕ່ບໍ່ກ້າ ແລະ ມື້ນີ້ລາວພ້ອມແລ້ວທີ່ຈະເປັນ "ກະບອກສຽງ" ໃຫ້ກັບໄວໜຸ່ມຄົນອື່ນໆ ໂດຍມຸ່ງຫວັງໃຫ້ສັງຄົມອອນລາຍເປັນ "ພື້ນທີ່ປອດໄພ ແລະ ເປີດກວ້າງ" ທີ່ຕັ້ງຢູ່ເທິງພື້ນຖານການເຄົາລົບເຊິ່ງກັນແລະກັນຢ່າງແທ້ຈິງ.



info@laja.la | LAO.Info@care.org
@LaoJournalistsAssociation | @careinlaos
@Laja24 | @careinlaos
www.laja.la | www.careint.org.la
CARE International in Lao PDR

ໃຫ້ທຶນໂດຍ ສະຫະພາບ ເອີຣົບ

care

Lao Journalists Association







# ຈາກ "ຜູ້ສິ່ງເສີມ" ສູ່ "ກະບອກສຽງແຫ່ງການກະທຳ": ການເຕີບໂຕຂອງ ສຸດາລັດ ໄຊຊະນະວົງ

ໃນໂລກອອນລາຍທີ່ກວ້າງໃຫຍ່, ສິດໃນການສະແດງອອກແມ່ນພະລັງທີ່ສຳຄັນ. ສຳລັບ ນາງ ສຸດາລັດ ໄຊຊະນະວົງ, ການຝຶກອົບຮົມຄັ້ງນີ້ໄດ້ມອບສິດໃນການພັດທະນາຕົນເອງ ແລະ ປ່ຽນບົດບາດຂອງລາວຈາກຄົນທີ່ພຽງແຕ່ "ສົ່ງເສີມ" ໃຫ້ຄົນອື່ນຮັກສາສິ່ງແວດລ້ອມ ມາເປັນ "ກະບອກສຽງ" ທີ່ລົງມືເຮັດເປັນແບບຢ່າງ ແລະ ສ້າງທາງອອກໃຫ້ກັບສັງຄົມ.

## ມຸມມອງໃໝ່: ຄວາມຈິງຂອງ Fast Fashion

ສຸດາລັດ ໄດ້ເຂົ້າໃຈຢ່າງເລິກເຊິ່ງເຖິງຕົ້ນເຫດຂອງພາວະໂລກຮ້ອນທີ່ເກີດຈາກການປ່ອຍກາກບອນ. ສິ່ງທີ່ເຮັດໃຫ້ລາວພູມໃຈທີ່ສຸດຄືການຜະລິດຜົນງານກ່ຽວກັບ "Fast Fashion" ເຊິ່ງເປີດມຸມມອງໃໝ່ໃຫ້ລາວ ແລະ ສັງຄົມໄດ້ຮັບຮູ້ວ່າ ພຽງແຕ່ການບໍລິໂພກເສື້ອຜ້າໃນຊີວິດປະຈຳວັນ ກໍສາມາດສົ່ງຜົນກະທົບເຮັດໃຫ້ໂລກຂອງເຮົາຮ້ອນຂຶ້ນໄດ້ຢ່າງມະຫາສານ.

## ສື່ຍຸກໃໝ່: ຂັບເຄື່ອນດ້ວຍປັນຍາປະດິດ (AI)

ໜຶ່ງໃນທັກສະທີ່ລາວໝັ້ນໃຈ ແລະ ສາມາດນຳໄປນຳໃຊ້ໄດ້ທັນທີແມ່ນການນຳໃຊ້ປັນຍາປະດິດເຂົ້າຊ່ວຍ. ລາວໄດ້ທົດລອງໃຊ້ຄຳສັ່ງ (Prompt) ໃນການອອກແບບໂປສເຕີ ເພື່ອນຳມາຊ່ວຍໃນວຽກງານສື່ສານສະພາບແວດລ້ອມ, ເຊິ່ງເປັນເຄື່ອງມືສຳຄັນໃນການໃຫ້ຄວາມຮູ້ແກ່ເດັກນ້ອຍ ແລະ ສັງຄົມໄດ້ຢ່າງມີປະສິດທິພາບ.

## ສິ່ງທ້າທາຍ ແລະ ຄວາມຫວັງໃນການປ່ຽນແປງ

ເຖິງແມ່ນວ່າການປຸກລະດົມໃຫ້ຄົນຫັນມາໃສ່ໃຈສິ່ງແວດລ້ອມຈະເປັນເລື່ອງຍາກ, ແຕ່ລາວກໍຫວັງວ່າຜົນງານທີ່ສ້າງຂຶ້ນຈະຊ່ວຍປ່ຽນພຶດຕິກຳຜູ້ຄົນໄດ້. ເພາະສິ່ງທີ່ລາວນຳສະເໜີນັ້ນ ເປັນວິທີທີ່ທຸກຄົນສາມາດລົງມືເຮັດໄດ້ທັນທີໃນຊີວິດຈິງ ໂດຍບໍ່ຈຳເປັນຕ້ອງລົງທຶນ ຫຼື ໃຊ້ຈ່າຍຫຍັງເລີຍ.

## ວິໄສທັດສູ່ອະນາຄົດ: ສັງຄົມອອນລາຍທີ່ພັດທະນາ

ສຸດາລັດ ມຸ່ງຫວັງໃຫ້ສັງຄົມອອນລາຍໃນລາວເຕີບໂຕໄປໃນທິດທາງທີ່ທັນສະໄໝ ແລະ ເອົາໃຈໃສ່ບັນຫາທີ່ມັກຖືກມອງຂ້າມ. ຕັ້ງແຕ່ບັນຫາໃກ້ຕົວເຊັ່ນ ການຖິ້ມຂີ້ເຫຍື້ອຊະຊາຍ ຈົນເຖິງການຊຸກຍູ້ໃຫ້ໂຮງງານຫຼຸດຜ່ອນການປ່ອຍອາຍພິດ ລ້ວນແຕ່ເປັນເປົ້າໝາຍທີ່ລາວຢາກໃຊ້ສື່ເພື່ອປຸກລະດົມ ແລະ ສ້າງການປ່ຽນແປງທີ່ດີຂຶ້ນ.



info@laja.la | LAO.Info@care.org
@LaoJournalistsAssociation | @careinlaos
@Laja24 | @careinlaos
www.laja.la | www.careint.org.la
CARE International in Lao PDR

ໃຫ້ທຶນໂດຍ ສະຫະພາບ ເອີຣົບ







## ຈາກການຕາມຫາ "ຍອດໄລກ໌" ສູ່ "ນັກເລົ່າເລື່ອງ" ເພື່ອສິ່ງແວດລ້ອມ: ບາດກ້າວໃໝ່ຂອງ ນໍ້າຫວານ ຢາງ

ໂລກອອນລາຍມັກຖືກໃຊ້ເປັນພື້ນທີ່ສະແຫວງຫາຄວາມນິຍົມ, ແຕ່ສຳລັບ ນາງ ນໍ້າຫວານ ຢາງ, ການຝຶກອົບຮົມຄັ້ງນີ້ໄດ້ປ່ຽນແປງເປົ້າໝາຍຂອງລາວຢ່າງສິ້ນເຊີງ. ລາວໄດ້ຫັນປ່ຽນຈາກການສ້າງຄອນເທນເພື່ອຫວັງພຽງ "ຍອດໄລກ໌" ແລະ ຍອດວິວ ມາເປັນນັກສື່ສານທີ່ມຸ່ງສ້າງປະໂຫຍດໃຫ້ແກ່ສັງຄົມ. ນໍ້າຫວານເຊື່ອໝັ້ນຢ່າງເລິກເຊິ່ງວ່າ ກ່ອນທີ່ເຮົາຈະຮຽກຮ້ອງໃຫ້ຜູ້ອື່ນປ່ຽນແປງພຶດຕິກຳ, ຕົວເຮົາເອງຕ້ອງລົງມືເຮັດ ແລະ ເປັນແບບຢ່າງທີ່ດີໃຫ້ໄດ້ເສຍກ່ອນ.

ຈຸດປ່ຽນທີ່ເຮັດໃຫ້ລາວຕື່ນຕົວທີ່ສຸດຄືການຮັບຮູ້ວ່າ ວິກິດການປ່ຽນແປງສະພາບອາກາດ ເຊັ່ນ: ໄພແລ້ງ, ຝຸ່ນ PM 2.5 ແລະ ບັນຫາຂີ້ເຫຍື້ອ ບໍ່ແມ່ນເລື່ອງຂອງອະນາຄົດ ຫຼື ເປັນພຽງໜ້າທີ່ຂອງອົງກອນໃຫຍ່ອີກຕໍ່ໄປ, ແຕ່ມັນຄືໄພຄຸກຄາມທີ່ເກີດຂຶ້ນແລ້ວໃນມື້ນີ້ ແລະ ພົວພັນກັບວິຖີຊີວິດເຮົາໂດຍກົງ. ລາວໄດ້ລົງມືປ່ຽນແປງຕົນເອງທັນທີ ຜ່ານການຫຼຸດຂີ້ເຫຍື້ອອາຫານ, ອະນາໄມຮ່ອງນໍ້າ, ຈັດວາງຖັງຂີ້ເຫຍື້ອໜ້າບ້ານເພື່ອຫຼຸດການຖິ້ມຊະຊາຍ, ລວມເຖິງການຫັນມາຍ່າງ ແລະ ປັ່ນລົດຖີບແທນການໃຊ້ລົດຈັກໃນໄລຍະໃກ້ ເພື່ອຊ່ວຍຫຼຸດມົນລະພິດ ແລະ ປະຢັດພະລັງງານ.

ໃນຖານະຜູ້ຜະລິດສື່, ນໍ້າຫວານໄດ້ນຳໃຊ້ເຕັກນິກ "ການເລົ່າເລື່ອງສັ້ນ" (Short Storytelling) ຜ່ານແຄມເປນ “ຂ້ອຍບໍ່ຖິ້ມ, ເຈົ້າບໍ່ຖິ້ມ ກໍຊ່ວຍປະເທດລາວໄດ້ຫຼາຍ” ເທິງແພລດຟອມ TikTok ແລະ Facebook. ແທນທີ່ຈະໃຊ້ຕົວເລກ ຫຼື ຄຳສັບເຕັກນິກດ້ານສິ່ງແວດລ້ອມທີ່ໜ້າເບື່ອ, ລາວເລືອກທີ່ຈະ "ແປ" ຂໍ້ມູນເຫຼົ່ານັ້ນໃຫ້ເປັນພາສາທີ່ເຂົ້າໃຈງ່າຍ, ມ່ວນຊື່ນ ແລະ ເບິ່ງເປັນເລື່ອງ "ເທ້". ຜົນງານຂອງລາວບໍ່ເນັ້ນການບັງຄັບ ຫຼື ຕັດສິນໃຜ ແຕ່ເນັ້ນການສ້າງແຮງບັນດານໃຈໃຫ້ຜູ້ຊົມຢາກລົງມືເຮັດຕາມດ້ວຍຄວາມເຕັມໃຈ.

ສຳລັບອະນາຄົດ, ນໍ້າຫວານບໍ່ຕ້ອງການໃຫ້ປະເດັນສິ່ງແວດລ້ອມເປັນພຽງກະແສຊົ່ວຄາວໃນໂລກໂຊຊຽວ. ລາວມຸ່ງຫວັງທີ່ຈະເຫັນການລວມຕົວເປັນຊຸມຊົນ (Community) ຂອງຄົນລຸ້ນໃໝ່ຢ່າງແທ້ຈິງ ທີ່ກ້າເຂົ້າມາຕັ້ງຄຳຖາມ, ແລກປ່ຽນຄວາມຄິດ ແລະ ຊອກຫາທາງອອກຮ່ວມກັນຢ່າງຈິງຈັງ ເພື່ອເປັນແຮງຂັບເຄື່ອນໃຫ້ປະເທດລາວມີຄວາມສະອາດງາມຕາ ແລະ ກ້າວໄປສູ່ການພັດທະນາທີ່ຍືນຍົງຕະຫຼອດໄປ.



info@laja.la | LAO.Info@care.org
@LaoJournalistsAssociation | @careinlaos
@Laja24 | @careinlaos
www.laja.la | www.careint.org.la
CARE International in Lao PDR

ໃຫ້ທຶນໂດຍ ສະຫະພາບ ເອີຣົບ









# ຈາກການສອນທາງດຽວ ສູ່ການກຽມພ້ອມເປັນ "ຄູຝຶກ" ດ້ານສື່ສີຂຽວ: ບາດກ້າວໃໝ່ຂອງ ວິໄລວອນ ສິດທິໄຊ

ໃນອະດີດ, ທ່ານ ວິໄລວອນ ສິດທິໄຊ ເຄີຍມີປະສົບການສອນທັກສະການຂຽນຂ່າວ ແລະ ຖ່າຍພາບມາກ່ອນ, ແຕ່ຮູບແບບການສອນສ່ວນໃຫຍ່ຍັງເປັນການໃຫ້ຄວາມຮູ້ແບບທາງດຽວ. ໃນຂະນະດຽວກັນ, ການລາຍງານຂ່າວ "ບັນຫາສີຂຽວ" ຍັງເປັນສິ່ງທີ່ທ້າທາຍສໍາລັບລາວ ເນື່ອງຈາກຍັງຂາດຄວາມເຂົ້າໃຈທີ່ກວ້າງຂວາງ ແລະ ບໍ່ໝັ້ນໃຈວ່າປະເດັນໃດແດ່ທີ່ເຊື່ອມໂຍງກັບບັນຫາດັ່ງກ່າວ. ການເຂົ້າຮ່ວມຝຶກອົບຮົມຄູຝຶກ (ToT) ໃນຄັ້ງນີ້ ຈຶ່ງກາຍເປັນຈຸດປ່ຽນສໍາຄັນທີ່ຍົກລະດັບທັງທັກສະການສື່ສານ ແລະ ກຽມຄວາມພ້ອມໃຫ້ລາວກ້າວຂຶ້ນເປັນຄູຝຶກທີ່ເນັ້ນການມີສ່ວນຮ່ວມ.

ວິໄລວອນ ໄດ້ຄົ້ນພົບເຕັກນິກໃໝ່ໃນການເຮັດໃຫ້ຂ່າວສິ່ງແວດລ້ອມທີ່ເຂົ້າໃຈຍາກ ກາຍເປັນເລື່ອງໜ້າສົນໃຈ ໂດຍການປ່ຽນຈາກການລາຍງານແບບທາງການ ມາເປັນການເລົ່າເລື່ອງ (Storytelling). ລາວເນັ້ນການນໍາສະເໜີຜົນກະທົບທີ່ມີຕໍ່ບຸກຄົນ, ວິຖີຊີວິດ ແລະ ເສດຖະກິດ ເພື່ອດຶງດູດຈິດໃຈຜູ້ອ່ານໃຫ້ຮູ້ສຶກວ່າບັນຫາເຫຼົ່ານັ້ນເປັນເລື່ອງໃກ້ຕົວ. ພ້ອມກັນນັ້ນ, ລາວຍັງໄດ້ຮຽນຮູ້ວິທີການສອນແບບມີສ່ວນຮ່ວມ ເຊິ່ງປ່ຽນຈາກການນັ່ງຟັງລ້າໆ ມາເປັນການລົງມືປະຕິບັດຕົວຈິງ, ແລກປ່ຽນຄວາມຄິດເຫັນ ແລະ ສ້າງບັນຍາກາດທີ່ມ່ວນຊື່ນ ເຮັດໃຫ້ຜູ້ຮຽນຈື່ຈໍາບົດຮຽນໄດ້ດີຂຶ້ນ.

ຈຸດຫັນປ່ຽນທີ່ເຮັດໃຫ້ລາວຮູ້ສຶກເຖິງການປ່ຽນບົດບາດຈາກ "ຜູ້ຮຽນ" ມາສໍາຜັດການເປັນ "ຄູຝຶກ" ແມ່ນຕອນທີ່ໄດ້ລົງມືສ້າງບົດສອນ ແລະ ຂຶ້ນປະຕິບັດຕົວຈິງໃນລະຫວ່າງການຝຶກອົບຮົມ. ການຮູ້ຈັກກໍານົດເປົ້າໝາຍ, ຈັດລຽງເນື້ອໃນໃຫ້ເປັນລະບົບ ແລະ ການນໍາໃຊ້ກິດຈະກໍາຜ່ອນຄາຍ ເຮັດໃຫ້ລາວຮຽນຮູ້ທີ່ຈະຫຼຸດພົ້ນຈາກການເປັນພຽງຜູ້ເວົ້າຢູ່ຝ່າຍດຽວ. ລາວໄດ້ເຂົ້າໃຈຢ່າງເລິກເຊິ່ງວ່າ ຄູຝຶກທີ່ດີຕ້ອງບໍລິຫານເວລາໃຫ້ເປັນ ແລະ ດຶງເອົາຜູ້ເຂົ້າຮ່ວມມາມີສ່ວນຮ່ວມໃນການຮຽນຮູ້ໃຫ້ຫຼາຍທີ່ສຸດ.

ປັດຈຸບັນ, ວິໄລວອນ ມີຄວາມໝັ້ນໃຈເຕັມຮ້ອຍທີ່ຈະນໍາເອົາຄວາມຮູ້ດ້ານການລາຍງານຂ່າວສີຂຽວ ໄປຝຶກອົບຮົມຕໍ່ໃຫ້ກັບນັກຂ່າວຂັ້ນເມືອງ ພາຍໃຕ້ແຜນການຂອງຄະນະໂຄສະນາອົບຮົມແຂວງ. ລາວເຊື່ອໝັ້ນວ່າ ການສະໜັບສະໜູນຈາກສະຫະພາບເອີຣົບ, ອົງການແຄຣ໌ ນານາຊາດ ປະຈໍາ ສປປ ລາວ ແລະ ສະມາຄົມນັກຂ່າວແຫ່ງ ສປປ ລາວ ບໍ່ພຽງແຕ່ຊ່ວຍໃຫ້ນັກຂ່າວເກັ່ງຂຶ້ນເທົ່ານັ້ນ ແຕ່ຍັງເປັນການວາງຮາກຖານອັນແຂງແກ່ນໃຫ້ສື່ມວນຊົນທ້ອງຖິ່ນທົ່ວປະເທດ ສາມາດລາຍງານຂ່າວສິ່ງແວດລ້ອມໄດ້ຢ່າງເປັນມືອາຊີບ, ທັນສະໄໝ ແລະ ສ້າງຜົນກະທົບທາງບວກຕໍ່ສັງຄົມ ແລະ ທໍາມະຊາດຢ່າງແທ້ຈິງ.



info@laja.la | LAO.Info@care.org
@LaoJournalistsAssociation | @careinlaos
@Laja24 | @careinlaos
www.laja.la | www.careint.org.la
CARE International in Lao PDR

ໃຫ້ທຶນໂດຍ ສະຫະພາບ ເອີຣົບ







# ຈາກນັກຂຽນຂ່າວ ສູ່ການເປັນ "ຄູຝຶກ" ດ້ານສື່ສີຂຽວ: ບາດກ້າວໃໝ່ຂອງ ແສງສະເດັດ ພິມມະສັກ

ໂລກຂອງສິ່ງແວດລ້ອມເຕັມໄປດ້ວຍຂໍ້ມູນທີ່ຊັບຊ້ອນ. ສຳລັບ ທ່ານ ແສງສະເດັດ ພິມມະສັກ, ການສື່ສານເລື່ອງການປ່ຽນແປງສະພາບອາກາດ ຫຼື ມົນລະພິດໃຫ້ປະຊາຊົນເຂົ້າໃຈ ເຄີຍເປັນສິ່ງທ້າທາຍອັນໃຫຍ່ຫຼວງ. ເຖິງຈະໝັ້ນໃຈໃນການຂຽນຂ່າວ, ແຕ່ລາວຍັງຂາດຄວາມໝັ້ນໃຈໃນການຂຶ້ນນຳສະເໜີ ແລະ ການເປັນຄູຝຶກ ເພາະຍັງຂາດເຕັກນິກການສື່ສານ. ການເຂົ້າຮ່ວມຝຶກອົບຮົມຄູຝຶກ (ToT) ໃນຄັ້ງນີ້ ໄດ້ກາຍເປັນຈຸດຫັນປ່ຽນທີ່ປົດລັອກສັກກະຍະພາບ ແລະ ສ້າງຄວາມໝັ້ນໃຈໃຫ້ລາວຢ່າງເຕັມຕົວ.

ແສງສະເດັດ ໄດ້ຄົ້ນພົບພະລັງຂອງການເລົ່າເລື່ອງ (Storytelling). ລາວໄດ້ຮຽນຮູ້ທີ່ຈະຍ່ອຍຂໍ້ມູນວິຊາການທີ່ຍາກໆ ໃຫ້ກາຍເປັນມຸມຂ່າວທີ່ໃກ້ຕົວປະຊາຊົນ ໂດຍນຳໃຊ້ພາບ ແລະ ວິດີໂອເຂົ້າຊ່ວຍດຶງດູດຄວາມສົນໃຈ. ສິ່ງສຳຄັນທີ່ສຸດຄືການປ່ຽນຮູບແບບການສອນ ຈາກການບັນຍາຍທາງດຽວ ມາເປັນການຮຽນຮູ້ແບບມີສ່ວນຮ່ວມ ເຊິ່ງເປີດໂອກາດໃຫ້ຜູ້ຮຽນໄດ້ລົງມືປະຕິບັດ ແລະ ກ້າສະແດງຄວາມຄິດເຫັນຢ່າງເປີດກວ້າງ.

ການໄດ້ລົງມືສ້າງບົດສອນດ້ວຍຕົນເອງ ເຮັດໃຫ້ລາວເຂົ້າໃຈວ່າການເປັນຄູຝຶກທີ່ດີ ຕ້ອງມີການວາງແຜນຢ່າງເປັນລະບົບ ແລະ ບໍລິຫານເວລາໃຫ້ເປັນ. ໃນວິນາທີທີ່ໄດ້ຂຶ້ນປະຕິບັດການສິດສອນຕົວຈິງ, ເຖິງຈະມີຄວາມຕື່ນເຕັ້ນກົດດັນໃນຕອນຕົ້ນ ແຕ່ການໄດ້ຮັບຟັງ ແລະ ເປີດໃຈຮັບເອົາຄວາມຄິດເຫັນຂອງຜູ້ເຂົ້າຮ່ວມ ໄດ້ປ່ຽນຄວາມກົດດັນນັ້ນໃຫ້ກາຍເປັນຄວາມໝັ້ນໃຈ. ລາວຮູ້ສຶກເຖິງການປ່ຽນແປງຈາກບົດບາດ "ຜູ້ຮຽນ" ກາຍມາເປັນ “ຄູຝຶກ" ຢ່າງແທ້ຈິງ ເມື່ອສາມາດນຳພາວົງສົນທະນາໃຫ້ທຸກຄົນແລກປ່ຽນກັນຢ່າງເປີດໃຈ.

ມື້ນີ້, ແສງສະເດັດ ມີຄວາມພ້ອມເຕັມປ່ຽມທີ່ຈະນຳເອົາຄວາມຮູ້ໄປສືບຕໍ່. ລາວມີແຜນການຊັດເຈນທີ່ຈະລົງພື້ນທີ່ຈັດຝຶກອົບຮົມໃຫ້ກັບຊາວໜຸ່ມ ໃນໂຄງການ "ມື້ລະຖົງ One bag a day" ແລະ ລາຍການ "ເປີດໃຈໄວໜຸ່ມ Open heart open wave" ທີ່ແຂວງຈຳປາສັກ. ລາວເຊື່ອໝັ້ນວ່າ ການສະໜັບສະໜູນຈາກ ສະຫະພາບເອີຣົບ, ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ ແລະ ສະມາຄົມນັກຂ່າວແຫ່ງ ສປປ ລາວ ຈະເປັນກຸນແຈສຳຄັນໃນການສ້າງເຄືອຂ່າຍນັກຂ່າວດ້ານສິ່ງແວດລ້ອມທີ່ເຂັ້ມແຂງ ເພື່ອສ້າງຄວາມຕະໜັກຮູ້ໃຫ້ກັບສັງຄົມລາວຕໍ່ໄປຢ່າງຍືນຍົງ.



info@laja.la | LAO.Info@care.org
@LaoJournalistsAssociation | @careinlaos
@Laja24 | @careinlaos
www.laja.la | www.careint.org.la
CARE International in Lao PDR

ໃຫ້ທຶນໂດຍ ສະຫະພາບ ເອີຣົບ

ໃຫ້ທຶນໂດຍ ສະຫະພາບ ເອີຣົບ

# ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສື່ມວນຊົນ ໂດຍການ ມີສ່ວນຮ່ວມຂອງອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອການພັດທະນາສີຂຽວ ໃນ ສປປ ລາວ


ປະຊາຊົນກຳລັງລາຍງານ ແລະ ວາງແຜນຮ່ວມກັນ ໃນການປັບຕົວ ຕໍ່ກັບການປ່ຽນແປງດິນຟ້າອາກາດ.

## ແຜນທີ່



ທີ່ຕັ້ງໂຄງການ
ນະຄອນຫຼວງວຽງຈັນ

ພື້ນທີ່ເປົ້າໝາຍ
ຫຼວງພະບາງ, ຈຳປາສັກ

ໄລຍະເວລາ
ມີນາ 2023 - ກຸມພາ 2027

ຜູ້ໄດ້ຮັບຜົນປະໂຫຍດ
ທາງກົງ ຜູ້ຊາຍ ແລະ ແມ່ຍິງ 6,155 ຄົນ
ທາງອ້ອມ ຜູ້ຊາຍ ແລະ ແມ່ຍິງ 10,000 ຄົນ

ຄູ່ຮ່ວມງານ
ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ກົມສື່ມວນຊົນ ແລະ ສະມາຄົມນັກຂ່າວ ແຫ່ງ ສປປ ລາວ

## ຄວາມເປັນມາຂອງ ໂຄງການ

ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສື່ມວນຊົນ ໂດຍການມີສ່ວນຮ່ວມຂອງອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອການພັດທະນາສີຂຽວ ໃນ ສປປ ລາວ ແມ່ນໂຄງການໜຶ່ງທີ່ໄດ້ເຮັດວຽກກັບບັນດາສື່ມວນຊົນຂອງລັດ ແລະ ເອກະຊົນ ເພື່ອປັບປຸງທັກສະວິຊາຊີບຂອງນັກຂ່າວລາວ ໂດຍການເພີ່ມຄວາມຮູ້ທາງດ້ານສື່ດີຈີຕອລ ແລະ ຄວາມເຂົ້າໃຈກ່ຽວກັບສື່ແບບໃໝ່. ໂຄງການ ໄດ້ຮັບການສະໜັບສະໜູນຈາກ ໂຄງການ ພັດທະນາສີຂຽວຂອງສະຫະພາບ ເອີຣົບ ທີ່ໃຫ້ການສະໜັບສະໜູນນະໂຍບາຍໃນຂົງເຂດດ້ານການປັບຕົວ ແລະ ການຫຼຸດຜ່ອນຄວາມສ່ຽງຕໍ່ກັບດິນຟ້າອາກາດ, ການພັດທະນາເສດຖະກິດ-ສັງຄົມ ແບບຍືນຍົງ.

ໂຄງການ ຍັງໄດ້ເສີມຂະຫຍາຍການຮັບຮູ້ທາງດ້ານ ສື່ດີຈີຕອລ ແລະ ການພັດທະນາສີຂຽວ ເພື່ອເພີ່ມການເຂົ້າເຖິງຂໍ້ມູນຂ່າວສານ ການພັດທະນາທີ່ກ່ຽວຂ້ອງກັບບົດບາດທາງເພດ, ສິດທິຂອງຜູ້ອອກແຮງງານ ແລະ ການພັດທະນາຊຸມຊົນໃນ ສປປ ລາວ ທີ່ຕິດພັນກັບການພັດທະນາສີຂຽວແບບຍືນຍົງ. ໂຄງການຍັງຈະເສີມສ້າງການມີສ່ວນຮ່ວມ, ທັດສະນະຄະຕິ, ວິໄສທັດ ແລະ ຄວາມສາມາດຂອງນັກຂ່າວ ດ້ວຍການສຸມໃສ່ການນຳໃຊ້ສື່ຢ່າງເຂັ້ມແຂງ ເພື່ອສົ່ງເສີມການເຕີບໂຕສີຂຽວຂອງປະຊາຊົນ ໃນ ສປປ ລາວ.

ຜ່ານການຝຶກອົບຮົມ, ການປະຊຸມ, ການແຂ່ງຂັນ ແລະ ການເຮັດກິດຈະກຳຕ່າງໆ, ອົງການຈັດຕັ້ງທາງສັງຄົມລາວ, ນັກຂ່າວລາວ, ນັກສ້າງຮູບເງົາ, ຢູທູບເບີ້ ຈະໄດ້ຮັບການເສີມຂະຫຍາຍຄວາມຮູ້ຄວາມສາມາດ, ໃຫ້ພວກເຂົາໄດ້ມີສ່ວນຮ່ວມຢ່າງສ້າງສັນເຂົ້າໃນການວາງນະໂຍບາຍ, ຕິດຕາມ ແລະ ຊຸກຍູ້ ໂດຍຜ່ານການລາຍງານທີ່ມີຄວາມຮັບຜິດຊອບ ແລະ ເປັນມືອາຊີບ ກ່ຽວກັບການພັດທະນາສີຂຽວ.

## ຈຸດປະສົງຂອງ ໂຄງການ

ເພື່ອແກ້ໄຂຊ່ອງວ່າງທາງດ້ານຄວາມຮູ້ທາງສື່ສັງຄົມ, ປັບປຸງການຮູ້ທາງດ້ານສື່ດີຈີຕອລ ແລະ ຫຼຸດຜ່ອນຄວາມສ່ຽງຂອງ "ຂ່າວປອມ" ໂດຍການເສີມສ້າງຂີດຄວາມສາມາດຂອງນັກຂ່າວລາວຢູ່ ນະຄອນຫຼວງວຽງຈັນ, ແຂວງ ຫຼວງພະບາງ ແລະ ແຂວງ ຈຳປາສັກ.

ເພື່ອເພີ່ມທະວີຄວາມຮັບຮູ້ກ່ຽວກັບບັນຫາສີຂຽວ ແລະ ການປ່ຽນແປງດິນຟ້າອາກາດໃນພື້ນທີ່ຊົນນະບົດຂອງ ສປປ ລາວ

## ຜູ້ໃຫ້ທຶນ

ສະຫະພາບ ເອີຣົບ

ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສື່ມວນຊົນ ໂດຍການມີສ່ວນຮ່ວມຂອງອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອການພັດທະນາສີຂຽວ ໃນ ສປປ ລາວ
2023